# ໜັງສືປູເດ

ໃຈຄວາມສຳຄັນ ຄວາມຫລົງຜິດຂອງຜູ້ທີ່ບໍ່ເກງກົວພຣະເຈົ້າ

ຈຳນວນບົດ ໑ ບົດ

## ວ່າດ້ວຍຜູ້ຂຽນ

ຜູ້ຂຽນໜັງສືນີ້ຄືທ່ານຢູເດຜູ້ເປັນຂ້າໃຊ້ຂອງພຣະເຢຊູຄຣິດ ແລະເປັນນ້ອງຊາຍຂອງຢາໂກໂບຂໍ້ ໑ ທັງເປັນນ້ອງຊາຍຂອງພຣະເຢຊູຄຣິດດ້ວຍ (ມັດທາຍ ໑໓:໕໕)

## ວ່າດ້ວຍຜູ້ຮັບໜັງສືນີ້

ພວກເຮົາບໍ່ຮູ້ຈັກວ່າ ທ່ານຢູເດໄດ້ຂຽນໜັງສືນີ້ເຖິງຄຣິສຕະຈັກໜ່ວຍໃດ ເພາະໃນຂໍ້ ໑ ບອກແຕ່ພຽງວ່າ "ຝາກມາຍັງພີ່ນ້ອງທັງຫລາຍຜູ້ຊຶ່ງເອີ້ນໄວ້ແລ້ວ" ແລະໜັງສືນີ້ທ່ານຢູເດໄດ້ຂຽນໃນປີດຽວກັນກັບເປໂຕທີ ນຶ່ງ ຄືໃນປີ ຄ.ສ. ໖໘

## ວ່າດ້ວຍຄວາມມຸ່ງໝາຍ

ຄວາມປະສົງຂອງທ່ານຢູເດທີ່ໄດ້ຂຽນໜັງສືນີ້ ເຫັນບອກໄວ້ໃນຂໍ້ ໓–໔ ວ່າ

໑. ເພື່ອບອກສອນພວກພີ່ນ້ອງວ່າ ຄວາມເຊື່ອທີ່ຊົງໂຜດໃຫ້ບໍຣິສຸດນັ້ນຈະມີແຕ່ພຽງຄັ້ງດຽວ ຂໍ້ ໓

໒. ເມື່ອຕັກເຕືອນພວກພີ່ນ້ອງໃຫ້ຣະມັດຣະວັງຄົນອະທັມ ຄົນທີ່ລັກເຂົ້າມາຮ່ວມແລະຄົນທີ່ປະຕິເສດພຣະອົງເຈົ້າເຢຊູຄຣິດ (ຂໍ້ ໔) ເພາະພວກເຂົາເປັນຄຣູສອນປອມ ມີກິຣິຍາອາຈາຊົ່ວ ແລະທັງເປັນເຫດໃຫ້ເກີດການວຸ້ນວາຍດ້ວຍ (ຂໍ້ ໘,໑໐,໑໖,໑໘,໑໙)

## ວ່າດ້ວຍເນື້ອຄວາມ

ເນື້ອໃນໃຈຄວາມ ຂອງ ໜັງສືນີ້ເໝືອນກັນກັບ ໜັງສືເປໂຕທີສອງ ຄືທ່ານຢູເດໄດ້ຂຽນໄປໃນທຳນອງດຽວກັນກັບໜັງສືນັ້ນ ແຕ່ຍັງມີສອງເຣື່ອງທີ່ແຕກຕ່າງກັບໜັງສືອື່ນຄື

໑. ເຣື່ອງທູດສວັນມີຄາເອັນໂຕ້ຖຽງກັບພະຍາມານກ່ຽວດ້ວຍເຣື່ອງກາຍຂອງໂມເຊ ຂໍ້ ໙

໒. ເຣື່ອງຄຳທຳນວາຍຂອງເຫນົກ ຂໍ້ ໑໔–໑໕

## ການແບ່ງເປັນພາກ

ຄຳນຳ ຂໍ້ ໑–໔

໑. ແຈ້ງຄວາມແລະໃຫ້ພອນແກ່ຜູ້ອ່ານ ຂໍ້ ໑–໒

໒. ບອກມູນເຫດທີ່ຂຽນໜັງສືນີ້ ຂໍ້ ໓–໔

ພາກທີ ໑ ວ່າດ້ວຍຄົນອະທັມ ຂໍ້ ໕–໑໖

໑. ຄົນອະທັມຈະຖືກທຳລາຍ ຂໍ້ ໕–໗

໒. ຄວາມປະພຶດຂອງຄົນອະທັມ ຂໍ້ ໘–໑໑

໓. ລັກສນະອາການຂອງຄົນອະທັມ ຂໍ້ ໑໒–໑໖

# ພາກທີ ໒ ວ່າດ້ວຍໜ້າທີການຂອງຄົນ


ເກິະຊືອ ຂໍ້ ໑໗-໒໓

໑. ໜ້າທີ່ການທີ່ໄດ້ຮັບຈາກພວກອັຄສາວົກ ຂໍ້ ໑໗-໑໙

໔. ໜ້າທີ່ການສ່ວນຕົວ ຂໍ້ ໔໐-໔໑

໓. ໜ້າທີ່ການກ່ຽວກັບຜູ້ອື່ນແລະຄໍາສຸດທ້າຍ ຂໍ້ ໔໔-໔໕


## ຈົດໝາຍຂອງທ່ານໂຢຮັນ

**ໜັງສືທີ່ຂຽນໂດຍທ່ານໂຢຮັນມີຢູ່ ໕ ລະບັບ**

໑. ໜັງສືຂ່າວປະເສີດ ເປັນໜັງສືທີ່ຂຽນເລົ່າພຣະຊິວະປະວັດແລະກິຈການຂອງພຣະເຢຊູ ໜັງສືນີ້ເອີ້ນກັນທົ່ວໆໄປວ່າ ໜັງສືຂ່າວປະເສີດຕາມທ່ານໂຢຮັນ ຫລືເອີ້ນສັ້ນໆວ່າ ໜັງສື ໂຢຮັນ

໒. ໜັງສືໂຢຮັນ ໑,໒,໓ ເປັນໜັງສືທີ່ຂຽນເຕີມສະຕິ ແລະ ເລົ້າໂລມໃຈຄົນທີ່ເຊື່ອທັງຫລາຍ

໓. ຄໍາປາກົດ ເປັນໜັງສືໃນລັກສນະຄໍາທໍານວາຍ ຄືເລົ່າເຫດທີ່ຈະເກີດຂຶ້ນໃນພາຍໜ້າ ໃນໜັງສືຂ່າວປະເສີດນັ້ນ ທ່ານໂຢຮັນໄດ້ຂຽນບອກວ່າ ພຣະເຢຊູຊາວຄາລິເລຊົງເປັນພຣະເຈົ້າ ສ່ວນໂຢຮັນທີ ໑,໔,໓ ເພີ່ນຂຽນບອກວ່າ ພຣະເຢຊູຊົງເປັນພຣະເຈົ້າທີ່ມີສພາບເປັນພຣະບຸດ ຄືຊົງເປັນພຣະເຈົ້າແລະມະນຸດພ້ອມກັນ